# ແຈ້ງການກ່ຽວກັບການປ່ຽນຊື່
# (ແຈ້ງການ)

ຂໍແຈ້ງໃຫ້ຊາບວ່າ, ໂດຍອີງຕາມການອະນຸມັດຈາກທະນາຄານແຫ່ງ ສປປ ລາວ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ, ຊື່ທີ່ຖືກຕ້ອງຕາມກົດໝາຍ: ທະນາຄານແຫ່ງປະເທດຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ແມ່ນໄດ້ປ່ຽນຊື່ຢ່າງເປັນທາງການມາເປັນ ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ຈຳກັດ ສາຂາ ນະຄອນຫຼວງວຽງຈັນ(Bank of China (Hong Kong) Limited Vientiane Branch), ພ້ອມກັນນີ້ ທະນາຄານພວກຂ້າພະເຈົ້າກໍ່ຈະໄດ້ນຳໃຊ້ກາຈ້ຳອອກຊື່ "ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ຈຳກັດ ສາຂາ ນະຄອນຫຼວງວຽງຈັນ", ສ່ວນກາຈ້ຳຕາມຊື່ເດີມແມ່ນຖືກລຶບລ້າງສິດໃນການນຳໃຊ້ໄປພ້ອມດ້ວຍ.

ຊື່ເດີມ: ທະນາຄານແຫ່ງປະເທດຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ
(Bank of China Limited Vientiane Branch)
ຊື່ໃໝ່: ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ
(Bank of China (Hong Kong) Limited Vientiane Branch)

ການປ່ຽນຊື່ໃໝ່ຂອງທະນາຄານຈະບໍ່ມີຜົນຕໍ່ກັບການປ່ຽນແປງເງື່ອນໄຂ ແລະ ຜົນສັກສິດໃດໆກ່ຽວກັບເອກະສານຕ່າງໆທີ່ທາງທະນາຄານໄດ້ເຊັນກັບທ່ານທີ່ຜ່ານມາ, ໃນໄລຍະການດຳເນີນການອັບເດດລະບົບ, ເວບໄຊ ແລະ ເອກະສານຈຳນວນໜຶ່ງແມ່ນຈະຍັງຄົງໃຊ້ຊື່ ທະນາຄານແຫ່ງປະເທດຈີນ ສາຂານະຄອນຫຼວງວຽງຈັນ. ການປ່ຽນແປງຊື່ໃນຄັ້ງນີ້ເປັນພຽງການຈັດລະບົບວຽກງານພາຍໃນຂອງກຸ່ມທະນາຄານແຫ່ງປະເທດຈີນ, ທະນາຄານພວກຂ້າພະເຈົ້າຂໍຮັບປະກັນວ່າ: ການບໍລິການຂອງທະນາຄານຈະຍັງໃຫ້ບໍລິການແບບຕໍ່ເນື່ອງໂດຍບໍ່ມີຜົນກະທົບຈາກການປ່ຽນຊື່ດັ່ງກ່າວ, ທະນາຄານພວກຂ້າພະເຈົ້າຈະຍັງຄົງໃຫ້ບໍລິການທີ່ດີທີ່ສຸດໃຫ້ທ່ານຄືດັ່ງທີ່ຜ່ານມາ, ຂໍຂອບໃຈທີ່ທ່ານໃຫ້ການສະໜັບສະໜູນຕໍ່ທະນາຄານພວກຂ້າພະເຈົ້າ.

ຖ້າຫາກມີຂໍ້ສົງໃສໃດໆຕໍ່ກັບແຈ້ງການສະບັບນີ້, ທ່ານສາມາດຕິດຕໍ່ພົວພັນກັບພະນັກງານຂອງທະນາຄານພວກຂ້າພະເຈົ້າໄດ້ຕະຫຼອດເວລາ.

ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ສາຂານະຄອນຫຼວງວຽງຈັນ,
ແມ່ນເປັນສາຂາຂອງ ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ຈຳກັດ ທີ່ຕັ້ງຢູ່ໃນ ສປປ ລາວ.

ຜູ້ມີອຳນາດເຊັນ:

ຊື່ ແລະ ນາມສະກຸນ: ທ່ານ ຫຼີ ຈື ຢົງ( Li Zhi Yong)
ຕຳແໜ່ງ: ຜູ້ຈັດການໃຫຍ່
ວັນທີ 15 ເດືອນ 10 ປີ 2020

ທະນາຄານແຫ່ງ ປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ
中国银行（香港）有限公司万象分行 Bank of China (Hong Kong) Limited Vientiane Branch
ຕັ້ງຢູ່ ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
ເບີໂທ: 021 – 228888, ເບີແຟັກ: 021 – 228880